**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ລັດຖະບານ ເລກທີ 350/ລບ

ນະຄອນຫຼວງວຽງຈັນ, ວັນທີ 13-11-2023

# ດຳລັດ
# ວ່າດ້ວຍທີ່ດິນບໍລິເວນນ້ຳ

- ອີງຕາມ ກົດໝາຍວ່າດ້ວຍລັດຖະບານ ສະບັບເລກທີ 03/ສພຊ, ລົງວັນທີ 16 ພະຈິກ 2021;
- ອີງຕາມ ກົດໝາຍວ່າດ້ວຍນ້ຳ ແລະ ຊັບພະຍາກອນນ້ຳ ສະບັບເລກທີ 23/ສພຊ, ລົງວັນທີ 11 ພຶດສະພາ 2017 ແລະ ກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍນ້ຳ ແລະ ຊັບພະຍາກອນນ້ຳ ສະບັບເລກທີ 84/ສພຊ, ລົງວັນທີ 01 ກໍລະກົດ 2020;
- ອີງຕາມ ກົດໝາຍວ່າດ້ວຍທີ່ດິນ ສະບັບເລກທີ 70/ສພຊ, ລົງວັນທີ 21 ມິຖຸນາ 2019;
- ອີງຕາມ ໜັງສືສະເໜີຂອງກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ສະບັບເລກທີ 2153/ກຊສ, ລົງວັນທີ 04 ສິງຫາ 2023.

**ລັດຖະບານ ອອກດຳລັດ:**

## ພາກທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ດຳລັດສະບັບນີ້ ກຳນົດ ຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຄຸ້ມຄອງ ແລະ ຕິດຕາມກວດກາ ວຽກງານທີ່ດິນບໍລິເວນນ້ຳ ເພື່ອເຮັດໃຫ້ວຽກງານດັ່ງກ່າວ ມີປະສິດທິພາບ, ປະສິດທິຜົນ ແນໃສ່ຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ ທີ່ດິນບໍລິເວນນ້ຳ ໃຫ້ມີຄວາມຍືນຍົງ, ຮັກສາຄວາມສົມດຸນຂອງລະບົບນິເວດ, ຄວາມຫຼາກຫຼາຍທາງດ້ານຊີວະນາມາພັນ ພ້ອມທັງເປັນບ່ອນບຳບັດຄຸນນະພາບນ້ຳ, ຫຼຸດຜ່ອນໄພນ້ຳຖ້ວມ, ໄພແຫ້ງແລ້ງ, ດູດຊັບທາດກາກບອນ ແລະ ການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງຊາດ ຕາມທິດສີຂຽວ ແລະ ຍືນຍົງ.

**ມາດຕາ 2 ທີ່ດິນບໍລິເວນນ້ຳ**

ທີ່ດິນບໍລິເວນນ້ຳ ແມ່ນ ທີ່ດິນທີ່ຢູ່ພື້ນນ້ຳ ຫຼື ຢູ່ຂອບເຂດອ້ອມແອ້ມແຫຼ່ງນ້ຳ ຊຶ່ງນອນຢູ່ໃນພື້ນທີ່ທີ່ດິນປະເພດອື່ນ ເປັນຕົ້ນ ເຂດພື້ນທີ່ດິນທາມ, ໜອງ ຫຼື ບຶງ, ທົ່ງຫຍ້ານ້ຳຖ້ວມ, ທີ່ດິນນ້ຳອອກບໍ່, ທີ່ດິນແຄມນ້ຳ, ທີ່ດິນ

ກາງນ້ຳ, ທີ່ດິນປົ່ງໃໝ່, ທີ່ດິນນ້ຳບຶກປະ ຫຼື ກຸດ, ທີ່ດິນທີ່ເກີດຈາກການດັດແປງ ຫຼື ອ່າຍແລວນ້ຳ, ນ້ຳຂັງ ຫຼື ໄຫຼຜ່ານ ທີ່ເກີດຂຶ້ນໂດຍທຳມະຊາດ ຫຼື ມະນຸດສ້າງຂຶ້ນ ຊຶ່ງມີລັກສະນະຖາວອນ ຫຼື ຊົ່ວຄາວ.

ຢູ່ໃນທີ່ດິນບໍລິເວນນ້ຳແຕ່ລະປະເພດ ອາດປະກອບມີ ດິນຖ່ານຕົມ, ດິນດຳ, ດິນດາກ, ດິນຊາຍ ແລະ ດິນອື່ນ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນດຳລັດສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ດິນນ້ຳບຶກປະ** ໝາຍເຖິງ ດິນທາມ, ດິນຊຸ່ມນ້ຳ, ທົ່ງຫຍ້ານ້ຳຖ້ວມ, ໜອງທຳມະຊາດທີ່ມີນ້ຳຂັງໃນຊ່ວງລະດູຝົນ, ລະດູແລ້ງບໍ່ມີນ້ຳ;
2. **ກຸດ** ໝາຍເຖິງ ໜອງນ້ຳ ຫຼື ສາຍນ້ຳ ທີ່ປ່ຽນທິດທາງການໄຫຼ ແລະ ມີນ້ຳຂັງຕະຫຼອດປີ;
3. **ໜອງ ຫຼື ບຶງ** ໝາຍເຖິງ ພື້ນທີ່ ທີ່ມີນ້ຳຂັງຕະຫຼອດປີ ຫຼື ບາງລະດູການ ທີ່ເກີດຂຶ້ນໂດຍທຳມະຊາດ ຫຼື ມະນຸດສ້າງຂຶ້ນ;
4. **ທີ່ດິນແຄມນ້ຳ** ໝາຍເຖິງ ທີ່ດິນຢູ່ອ້ອມແອ້ມແຫຼ່ງນ້ຳ ເປັນຕົ້ນ ຕາມແຄມນ້ຳ, ຫ້ວຍ, ຮ່ອງ, ບຶງ, ອ່າງເກັບນ້ຳ;
5. **ທີ່ດິນປົ່ງໃໝ່** ໝາຍເຖິງ ທີ່ດິນເກີດຈາກການທັບຖົມຂອງຕະກອນ, ການອ່າຍ ຫຼື ປ່ຽນແລວນ້ຳ ຊຶ່ງເກີດໂດຍທຳມະຊາດ ຫຼື ມະນຸດສ້າງຂຶ້ນ ເຮັດໃຫ້ມີທີ່ດິນປົ່ງຂຶ້ນ ຊົ່ວຄາວ ຫຼື ຖາວອນໃນພື້ນທີ່ໃດໜຶ່ງ;
6. **ທີ່ດິນກາງນ້ຳ** ໝາຍເຖິງ ເກາະ, ດອນ, ແກ້ງ ຊຶ່ງເກີດຂຶ້ນໂດຍທຳມະຊາດ ຫຼື ມະນຸດສ້າງຂຶ້ນ;
7. **ດິນຖ່ານຕົມ** ໝາຍເຖິງ ດິນຊະນິດໜຶ່ງຂອງພື້ນທີ່ດິນບໍລິເວນນ້ຳ ທີ່ມີຄວາມສຳຄັນ, ເປັນດິນອິນຊີ ທີ່ເກີດຈາກການເນົ່າເປື່ອຍຂອງຊາກພືດທັບຖົມກັນເປັນເວລາດົນນານ, ມີລັກສະນະເປັນສີນ້ຳຕານ ຫຼື ດຳ ແລະ ເປັນບ່ອນດູດຊຶມທາດກາກບອນ;
8. **ສົນທິສັນຍາຣາມຊາ (Ramsar Convention)** ໝາຍເຖິງ ສົນທິສັນຍາສາກົນ ກ່ຽວກັບ ພື້ນທີ່ດິນບໍລິເວນນ້ຳ ທີ່ມີຄວາມສຳຄັນໃນລະດັບສາກົນ ທີ່ກຳນົດກອບໜ້າວຽກ;
9. **ລຳດັບມາດຕະການຫຼຸດຜ່ອນຜົນກະທົບ (Mitigation Hierarchy)** ໝາຍເຖິງ ວິທີການຫຼຸດຜ່ອນຜົນກະທົບຈາກໂຄງການລົງທຶນ ຕໍ່ຊີວະນານາພັນ ແລະ ການບໍລິການລະບົບນິເວດທີ່ໄດ້ຮັບການຍອມຮັບຈາກສາກົນ ຊຶ່ງຕ້ອງນຳໃຊ້ມາດຕະການ ການຫຼີກລ່ຽງ, ຫຼຸດຜ່ອນ, ຟື້ນຟູ ແລະ ການທົດແທນຊີວະນານາພັນແບບຄືນຖ້ວນ (Offset) ແນໃສ່ການທົດແທນຊີວະນານາພັນເທົ່າເດີມ (No Net Loss) ຫຼື ການເພີ່ມຊີວະນານາພັນ (Net Gain);
10. **ການທົດແທນຊີວະນານາພັນແບບຄືນຖ້ວນ** ໝາຍເຖິງ ການດຳເນີນການ ເພື່ອຊົດເຊີຍຜົນກະທົບທາງລົບທີ່ຍັງເຫຼືອຄ້າງຕໍ່ຊີວະນານາພັນທີ່ເກີດຂຶ້ນ ແລະ ສືບຕໍ່ມີຈາກໂຄງການພັດທະນາ ຫຼັງຈາກໄດ້ດຳເນີນມາດຕະການຫຼີກລ່ຽງ, ຫຼຸດຜ່ອນ ແລະ ຟື້ນຟູຄືນ ຢ່າງເໝາະສົມແລ້ວ;
11. **ການທົດແທນຊີວະນານາພັນເທົ່າເດີມ** ໝາຍເຖິງ ຜົນໄດ້ຮັບຈາກການຈັດຕັ້ງປະຕິບັດລຳດັບມາດຕະການຫຼຸດຜ່ອນຜົນກະທົບ ຂອງໂຄງການພັດທະນາ ຊຶ່ງຜົນໄດ້ຮັບດັ່ງກ່າວ ໄດ້ບັນລຸຈຸດທີ່ຜົນກະທົບທາງລົບຕໍ່ຊີວະນານາພັນ ຖືກດຸ່ນດ່ຽງໂດຍຜົນກະທົບທາງບວກຕໍ່ຊີວະນານາພັນຢ່າງເໝາະສົມ;
12. **ການເພີ່ມຊີວະນານາພັນ** ໝາຍເຖິງ ຜົນໄດ້ຮັບຈາກການຈັດຕັ້ງປະຕິບັດລຳດັບມາດຕະການຫຼຸດຜ່ອນຜົນກະທົບຂອງໂຄງການພັດທະນາ ຊຶ່ງຜົນໄດ້ຮັບດັ່ງກ່າວ ໄດ້ບັນລຸຈຸດທີ່ຜົນກະທົບທາງບວກຕໍ່ຊີວະນານາພັນ ມີລະດັບລື່ນຜົນກະທົບທາງລົບຕໍ່ຊີວະນານາພັນ ຢ່າງເໝາະສົມ;
13. **ຂະແໜງການຄຸ້ມຄອງທີ່ດິນບໍລິເວນນ້ຳ** ໝາຍເຖິງ ຂະແໜງການທີ່ຄຸ້ມຄອງການນຳໃຊ້ທີ່ດິນແຕ່ລະປະເພດ ທີ່ມີທີ່ດິນບໍລິເວນນ້ຳ.

**ມາດຕາ 4 ຫຼັກການກ່ຽວກັບວຽກງານທີ່ດິນບໍລິເວນນໍ້າ**

ວຽກງານທີ່ດິນບໍລິເວນນໍ້າ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ສອດຄ່ອງກັບກົດໝາຍ, ຍຸດທະສາດ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນແມ່ບົດຈັດສັນທີ່ດິນແຫ່ງຊາດ, ສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ ແລະ ສັນຍາສາກົນທີ່ກ່ຽວຂ້ອງ;
2. ຮັບປະກັນການຄຸ້ມຄອງຢ່າງລວມສູນ ແລະ ເປັນເອກະພາບໃນທົ່ວປະເທດ;
3. ເອົາການປົກປັກຮັກສາ, ພັດທະນາ ແລະ ຟື້ນຟູ ທີ່ດິນບໍລິເວນນໍ້າ ເປັນວຽກງານສຳຄັນ;
4. ຮັບປະກັນການປະສານສົມທົບກັບ ຂະແໜງການ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນ;
5. ຮັບປະກັນຜົນປະໂຫຍດຂອງລັດ, ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ຄຸ້ມຄອງ, ປົກປັກຮັກສາ, ພັດທະນາ, ຟື້ນຟູ ແລະ ນຳໃຊ້ ທີ່ດິນບໍລິເວນນໍ້າ ຕາມກົດໝາຍ ແລະ ລະບຽບການ.

## ພາກທີ II
## ການກຳນົດທີ່ດິນບໍລິເວນນໍ້າ

**ມາດຕາ 5 ການກຳນົດທີ່ດິນບໍລິເວນນໍ້າ**

ການກຳນົດທີ່ດິນບໍລິເວນນໍ້າ ໃຫ້ປະຕິບັດຕາມຂັ້ນຕອນ ດັ່ງນີ້:

1. ການສຳຫຼວດ ແລະ ສ້າງແຜນທີ່ສະແດງຂອບເຂດທີ່ຕັ້ງ;
2. ການຮັບຮອງທີ່ດິນບໍລິເວນນໍ້າ;
3. ການຂຶ້ນບັນຊີທີ່ດິນບໍລິເວນນໍ້າ.

**ມາດຕາ 6 ການສຳຫຼວດ ແລະ ສ້າງແຜນທີ່ສະແດງຂອບເຂດທີ່ຕັ້ງ**

ຂະແໜງການຄຸ້ມຄອງທີ່ດິນບໍລິເວນນໍ້າ ເປັນເຈົ້າການໃນການສຳຫຼວດ ເກັບກຳຂໍ້ມູນ ກ່ຽວກັບຄຸນລັກສະນະຂອງພື້ນທີ່, ຊີວະນານາພັນ, ລະບົບນິເວດ ແລະ ເສດຖະກິດ-ສັງຄົມຂອງບ້ານ ທີ່ຢູ່ໃນ ແລະ ອ້ອມເຂດທີ່ຈະກຳນົດເປັນທີ່ດິນບໍເວນນໍ້າ ເພື່ອສະແດງຂອບເຂດທີ່ຕັ້ງ, ຈັດລະດັບ ຫຼື ແບ່ງຂັ້ນຄຸ້ມຄອງ ໂດຍປະສານສົມທົບກັບ ຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ຂະແໜງການອື່ນ, ອົງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ.

**ມາດຕາ 7 ການຮັບຮອງທີ່ດິນບໍລິເວນນໍ້າ**

ລັດຖະບານ ຫຼື ອົງການປົກຄອງຂັ້ນແຂວງ ເປັນຜູ້ຮັບຮອງ ທີ່ດິນບໍລິເວນນໍ້າ ຕາມການສະເໜີຂອງຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ໂດຍເປັນເອກະພາບກັບ ຂະແໜງການ, ອົງການ ແລະ ປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ.

ສຳລັບທີ່ດິນບໍລິເວນນໍ້າ ທີ່ມີເງື່ອນໄຂເປັນທີ່ດິນບໍລິເວນນໍ້າລະດັບສາກົນ ຕາມສົນທິສັນຍາຣາມຊາ ໃຫ້ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ປະສານສົມທົບກັບ ກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ຄົ້ນຄວ້າສະເໜີລັດຖະບານ ເພື່ອນຳສະເໜີຕໍ່ອົງການຈັດຕັ້ງສາກົນທີ່ກ່ຽວຂ້ອງຂຶ້ນທະບຽນເປັນທີ່ດິນບໍລິເວນນໍ້າ ລະດັບສາກົນ.

**ມາດຕາ 8 ການຂຶ້ນບັນຊີທີ່ດິນບໍລິເວນນໍ້າ**

ທີ່ດິນບໍລິເວນນໍ້າ ທີ່ໄດ້ຖືກຮັບຮອງແລ້ວ ຂະແໜງການຄຸ້ມຄອງທີ່ດິນບໍລິເວນນໍ້າ ຕ້ອງຂຶ້ນບັນຊີທີ່ດິນບໍລິເວນນໍ້າ ທີ່ຢູ່ໃນການຄຸ້ມຄອງຂອງຕົນ ແລ້ວສົ່ງໃຫ້ຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ.

ຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເປັນຜູ້ສັງລວມການຂຶ້ນບັນຊີທີ່ດິນບໍລິເວນນໍ້າຢ່າງລວມສູນ ແລະ ບັນທຶກເຂົ້າໃນຖານຂໍ້ມູນຄຸ້ມຄອງທີ່ດິນບໍລິເວນນໍ້າ ຂອງຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ.

## ພາກທີ III
## ການຄຸ້ມຄອງ, ການປົກປັກຮັກສາ, ການພັດທະນາ, ການຟື້ນຟູ ແລະ ການນຳໃຊ້ທີ່ດິນບໍລິເວນນໍ້າ

### ໝວດທີ 1
### ການຄຸ້ມຄອງທີ່ດິນບໍລິເວນນໍ້າ

**ມາດຕາ 9 ການຄຸ້ມຄອງທີ່ດິນບໍລິເວນນໍ້າ**

ການຄຸ້ມຄອງທີ່ດິນບໍລິເວນນໍ້າ ໃຫ້ປະຕິບັດ ດັ່ງນີ້:

1. ການສຳຫຼວດທີ່ດິນບໍລິເວນນໍ້າ;
2. ການສ້າງ ແລະ ຮັບຮອງ ແຜນການນຳໃຊ້ທີ່ດິນບໍລິເວນນໍ້າ;
3. ການຕິດປ້າຍຂອບເຂດ ແລະ ປັກຫຼັກໝາຍທີ່ດິນບໍລິເວນນໍ້າ.

**ມາດຕາ 10 ການສຳຫຼວດທີ່ດິນບໍລິເວນນໍ້າ**

ການສຳຫຼວດທີ່ດິນບໍລິເວນນໍ້າ ແມ່ນ ການເກັບກຳຂໍ້ມູນກ່ຽວກັບ ທີ່ຕັ້ງພູມສັນຖານ, ຂອບເຂດເນື້ອທີ່, ລັກສະນະກາຍະພາບ, ປະລິມານ, ຄຸນນະພາບນໍ້າ, ຄວາມຫຼາກຫຼາຍຂອງຊີວະນານາພັນ ແລະ ລະບົບນິເວດ, ຊະນິດພັນສັດນໍ້າ, ສັດປ່າ, ພັນພືດ, ເຄື່ອງປ່າຂອງດົງ ແລະ ສະພາບການນຳໃຊ້ທີ່ດິນດັ່ງກ່າວ ເພື່ອຂຶ້ນບັນຊີ ແລະ ການວາງແຜນນຳໃຊ້ທີ່ດິນບໍລິເວນນໍ້າ.

ຂະແໜງການຄຸ້ມຄອງທີ່ດິນບໍລິເວນນໍ້າ ເປັນເຈົ້າການ ປະສານສົມທົບກັບ ຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ຂະແໜງການອື່ນ, ອົງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ສຳຫຼວດທີ່ດິນບໍລິເວນນໍ້າ ດ້ວຍການເຂົ້າຮ່ວມຂອງປະຊາຊົນໃນທ້ອງຖິ່ນທີ່ກ່ຽວຂ້ອງ.

**ມາດຕາ 11 ການສ້າງ ແລະ ຮັບຮອງ ແຜນການນຳໃຊ້ທີ່ດິນບໍລິເວນນໍ້າ**

ຂະແໜງການຄຸ້ມຄອງທີ່ດິນບໍລິເວນນໍ້າ ສ້າງ ແລະ ຮັບຮອງ ແຜນການນຳໃຊ້ທີ່ດິນບໍລິເວນນໍ້າ ບົນພື້ນຖານຂໍ້ມູນສຳຫຼວດ ໂດຍມີການປະສານສົມທົບກັບ ຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ຂະແໜງການອື່ນ, ອົງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ແລະ ການເຂົ້າຮ່ວມຂອງປະຊາຊົນ ທີ່ຕັ້ງພູມລຳເນົາ ຢູ່ໃນ ແລະ ຕິດກັບທີ່ດິນບໍລິເວນນໍ້າ. ການສ້າງແຜນນຳໃຊ້ທີ່ດິນບໍລິເວນນໍ້າ ຕ້ອງສອດຄ່ອງກັບແຜນແມ່ບົດຈັດສັນທີ່ດິນແຫ່ງຊາດ, ແຜນຈັດສັນທີ່ດິນທ້ອງຖິ່ນ, ຍຸດທະສາດການຄຸ້ມຄອງ, ການນຳໃຊ້ນໍ້າ

ແລະ ຊັບພະຍາກອນນ້ຳແຫ່ງຊາດ, ແຜນການນຳໃຊ້ທີ່ດິນຂອງຂະແໜງການ ແລະ ແຜນພັດທະນາເສດຖະກິດ-ສັງຄົມຂອງທ້ອງຖິ່ນ.

ເນື້ອໃນຕົ້ນຕໍຂອງແຜນການນຳໃຊ້ທີ່ດິນບໍລິເວນນ້ຳ ປະກອບດ້ວຍ:

1. ສະພາບລວມທີ່ດິນບໍລິເວນນ້ຳ;
2. ເປົ້າໝາຍ ແລະ ຄາດໝາຍລວມຂອງແຜນການນຳໃຊ້ທີ່ດິນບໍລິເວນນ້ຳ;
3. ວຽກງານຈຸດສຸມໃນການຄຸ້ມຄອງ, ປົກປັກຮັກສາ, ພັດທະນາ, ຟື້ນຟູ ແລະ ນຳໃຊ້ທີ່ດິນບໍລິເວນນ້ຳ;
4. ແຜນງານ, ໂຄງການ ແລະ ກິດຈະກຳ ຢູ່ໃນທີ່ດິນບໍລິເວນນ້ຳ;
5. ຄວາມຮັບຜິດຊອບຂອງບັນດາຂະແໜງການທີ່ກ່ຽວຂ້ອງ;
6. ຕົວຊີ້ວັດ, ໄລຍະເວລາ ແລະ ຄາດຄະເນງົບປະມານ;
7. ກົນໄກການປະສານງານ ແລະ ມາດຕະການໃນການຈັດຕັ້ງປະຕິບັດ.

### ມາດຕາ 12 ການຕິດປ້າຍຂອບເຂດ ແລະ ປັກຫຼັກໝາຍທີ່ດິນບໍລິເວນນ້ຳ

ການຕິດປ້າຍຂອບເຂດ ແລະ ປັກຫຼັກໝາຍທີ່ດິນບໍລິເວນນ້ຳ ແມ່ນ ເພື່ອໃຫ້ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ລວມທັງປະຊາຊົນ ທີ່ຕັ້ງພູມລຳເນົາ ຢູ່ໃນ ແລະ ຕິດກັບທີ່ດິນບໍລິເວນນ້ຳ ຮັບຮູ້ຂອບເຂດ, ເຂດສະຫງວນທີ່ດິນບໍລິເວນນ້ຳ, ເສັ້ນທາງ ແລະ ເຂດພື້ນທີ່ອື່ນ.

ຂະແໜງການຄຸ້ມຄອງທີ່ດິນບໍລິເວນນ້ຳ ປະສານສົມທົບກັບ ຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ຂະແໜງການອື່ນ, ອົງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ດຳເນີນການຕິດປ້າຍຂອບເຂດ ແລະ ປັກຫຼັກໝາຍ.

## ໝວດທີ 2
## ການປົກປັກຮັກສາທີ່ດິນບໍລິເວນນ້ຳ

### ມາດຕາ 13 ການປົກປັກຮັກສາທີ່ດິນບໍລິເວນນ້ຳ

ການປົກປັກຮັກສາທີ່ດິນບໍລິເວນນ້ຳ ໃຫ້ປະຕິບັດ ດັ່ງນີ້:

1. ການກຳນົດເຂດສະຫງວນທີ່ດິນບໍລິເວນນ້ຳ;
2. ການກຳນົດເຂດສະຫງວນຢູ່ໜ້າດິນ;
3. ການກຳນົດເຂດສະຫງວນໃຕ້ດິນ;
4. ການກຳນົດເຂດສະຫງວນຢູ່ໜ້ານ້ຳ;
5. ການກຳນົດເຂດສະຫງວນຢູ່ດິນພື້ນນ້ຳ;
6. ການປົກປັກຮັກສາຊີວະນານາພັນ;
7. ການຄຸ້ມຄອງ ແລະ ຫຼຸດຜ່ອນຜົນກະທົບຂອງໂຄງການລົງທຶນ;
8. ສັນຍາອະນຸລັກ.

### ມາດຕາ 14 ການກຳນົດເຂດສະຫງວນທີ່ດິນບໍລິເວນນ້ຳ

ເຂດສະຫງວນທີ່ດິນບໍລິເວນນ້ຳ ແມ່ນ ເຂດທີ່ກຳນົດໃຫ້ເປັນພື້ນທີ່ຫວງຫ້າມ ແລະ ບໍ່ອະນຸຍາດໃຫ້ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ເຂົ້າໄປນຳໃຊ້ ຍົກເວັ້ນ ການສຶກສາຄົ້ນຄວ້າທາງດ້ານວິທະຍາສາດ, ກິດຈະການ

ຄຸ້ມຄອງທີ່ດິນບໍລິເວນນໍ້າ, ການນໍາໃຊ້ເພື່ອສັກກະລະບູຊາ ຫຼື ພິທີທາງສາສະໜາທີ່ບໍ່ແມ່ນການຂຸດຄົ້ນ ແລະ ການທ່ອງທ່ຽວແບບອະນຸລັກ ແນໃສ່ສະຫງວນໄວ້ເປັນເຂດອະນຸລັກຊີວະນາມາພັນ, ເຂດຫ້າມລ່າ ສັດນໍ້າ, ສັດປ່າ, ເຂດຫ້າມທໍາລາຍປ່າລຽບແຄມນໍ້າ ຫຼື ອະນາໄມພືດພັນພື້ນເມືອງຕ່າງໆເທິງໜ້ານໍ້າ, ເປັນແຫຼ່ງຮອງຮັບນໍ້າ ແລະ ການເກັບກັກນໍ້າ ຮັບປະກັນການຄຸ້ມຄອງຊັບພະຍາກອນນໍ້າ ແລະ ການສະໜອງນໍ້າຢ່າງພຽງພໍ ແລະ ຍືນຍົງ.

ເຂດສະຫງວນທີ່ດິນບໍລິເວນນໍ້າ ຈະຖືກກໍານົດຕາມຄຸນຄ່າທາງດ້ານຊີວະນາມາພັນ ແລະ ຄວາມສໍາຄັນດ້ານປະຫວັດສາດ ຊຶ່ງປະກອບມີເງື່ອນໄຂ ດັ່ງນີ້:

1. ເປັນເຂດບໍລິເວນຍອດນໍ້າ ທີ່ມີພືດ, ສັດປ່າ ແລະ ສັດນໍ້າ ທີ່ເກີດຂຶ້ນ ແລະ ຢູ່ອາໄສ ຕາມບັນຊີພືດ, ສັດປ່າ ແລະ ສັດນໍ້າ ປະເພດຫວງຫ້າມ ທີ່ກໍານົດໄວ້ໃນກົດໝາຍທີ່ກ່ຽວຂ້ອງ;
2. ເປັນເຂດທີ່ມີປະຫວັດສາດສໍາຄັນລະດັບຊາດ ຫຼື ທ້ອງຖິ່ນ;
3. ເປັນເຂດທີ່ມີດິນຖ່ານຕົມ;
4. ເປັນເຂດທີ່ອົງການປົກຄອງທ້ອງຖິ່ນ ຕ້ອງການສະເໜີເປັນເຂດສະຫງວນທີ່ດິນບໍລິເວນນໍ້າ ໄວ້ເປັນຊັບສິນລວມຂອງບ້ານ, ເມືອງ ຫຼື ແຂວງ ໂດຍອີງໃສ່ ຄຸນຄ່າ ດ້ານຊີວະນາມາພັນ, ດ້ານປະຫວັດສາດ.

ຂະແໜງການຄຸ້ມຄອງທີ່ດິນບໍລິເວນນໍ້າ ປະສານສົມທົບກັບ ຂະແໜງການຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ, ຂະແໜງການອື່ນ, ອົງການ, ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ແລະ ປະຊາຊົນທີ່ຕັ້ງພູມລໍາເນົາໃນພື້ນທີ່ ຄົ້ນຄວ້າ ແລະ ກໍານົດເຂົ້າໃນແຜນການນໍາໃຊ້ທີ່ດິນບໍລິເວນນໍ້າ.

### ມາດຕາ 15 ການກໍານົດເຂດສະຫງວນຢູ່ໜ້າດິນ

ການກໍານົດເຂດສະຫງວນຢູ່ໜ້າດິນ ແມ່ນ ການກໍານົດພື້ນທີ່ສະຫງວນໄວ້ ນັບຈາກແຄມຕາຝັ່ງເຂົ້າໄປໃນເຂດທີ່ດິນເບື້ອງໃນ ຢ່າງໜ້ອຍ ສາມສິບຫ້າແມັດ ສໍາລັບແມ່ນໍ້າຂອງ ແລະ ຊາວຫ້າແມັດ ສໍາລັບແມ່ນໍ້າອື່ນ, ສິບຫ້າແມັດ ສໍາລັບຫ້ວຍ, ໜອງ, ຄອງ, ຮ່ອງ, ບຶງ, ອ່າງເກັບນໍ້າ.

ການກໍານົດພື້ນທີ່ດັ່ງກ່າວ ໃຫ້ອີງຕາມຄວາມຈໍາເປັນ ຂອງມາດຕະຖານເຕັກນິກ ແລະ ກໍານົດໝາຍເຕັກນິກເພື່ອປ້ອງກັນຄວາມປອດໄພ ແລະ ປົກປັກຮັກສາສິ່ງແວດລ້ອມ, ທໍາມະຊາດ ແລະ ສັງຄົມ. ໃນກໍລະນີ ທີ່ມີພື້ນທີ່ຈໍາກັດໃນເຂດຊຸມຊົນໜາແໜ້ນ, ແຫຼ່ງວັດຖຸບູຮານ, ສະຖານທີ່ສໍາຄັນທາງດ້ານປະຫວັດສາດ ແລະ ເຂດອະນຸລັກນັ້ນພື້ນທີ່ເຂດສະຫງວນດິນບໍລິເວນນໍ້າ ໃຫ້ປະຕິບັດຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

### ມາດຕາ 16 ການກໍານົດເຂດສະຫງວນໃຕ້ດິນ

ການກໍານົດເຂດສະຫງວນໃຕ້ດິນ ແມ່ນ ການກໍານົດພື້ນທີ່ສະຫງວນຈາກໜ້າດິນເລິກລົງໄປຕາມເຂດສະຫງວນໜ້າດິນ ເພື່ອປ້ອງກັນຕາຝັ່ງເຊາະເຈື່ອນ, ຍຸບ ຫຼື ກໍ່ສ້າງໂຄງລ່າງພື້ນຖານທາງນໍ້າ. ຖ້າມີຄວາມຈໍາເປັນກໍ່ສ້າງກິດຈະການໃດໜຶ່ງ ເປັນຕົ້ນ ການວາງທໍ່ນໍ້າປະປາ, ທໍ່ລະບາຍນໍ້າ, ທໍ່ສາຍໄຟຟ້າ, ທໍ່ສົ່ງອາຍແກັສ ແລະ ອື່ນໆ ຢູ່ໃຕ້ດິນ ຕ້ອງໄດ້ຮັບອະນຸຍາດຈາກຂະແໜງການທີ່ກ່ຽວຂ້ອງ.

### ມາດຕາ 17 ການກໍານົດເຂດສະຫງວນຢູ່ໜ້ານໍ້າ

ການກໍານົດເຂດສະຫງວນຢູ່ໜ້ານໍ້າ ແມ່ນ ການກໍານົດພື້ນທີ່ນັບຈາກແຄມຕາຝັ່ງອອກໄປທາງແມ່ນໍ້າ ຢ່າງໜ້ອຍ ໜຶ່ງຮ້ອຍ ແມັດ ສໍາລັບແມ່ນໍ້າຂອງ ແລະ ສອງສ່ວນຫ້າ ຂອງຄວາມກວ້າງຂອງແມ່ນໍ້າ ສໍາລັບແມ່ນໍ້າອື່ນ, ຫ້ວຍ, ໜອງ ຫຼື ບຶງ, ຄອງ, ຮ່ອງ ແລະ ອື່ນໆ ເພື່ອຮັບປະກັນຄຸນນະພາບ, ປະລິມານ ນໍ້າ ແລະ ຊັບພະຍາກອນນໍ້າ, ບໍ່ໃຫ້ສ້າງສິ່ງກີດຂວາງທາງໄຫຼຂອງນໍ້າ ລວມທັງຊີວະນາມາພັນ ໃຫ້ຍືນຍົງ.

**ມາດຕາ 18 ການກຳນົດເຂດສະຫງວນຢູ່ດິນພື້ນນ້ຳ**

ການກຳນົດເຂດສະຫງວນຢູ່ດິນພື້ນນ້ຳ ແມ່ນ ການກຳນົດພື້ນທີ່ສະຫງວນນັບຈາກ ພື້ນດິນທີ່ຢູ່ໃຕ້ນ້ຳລົງໄປຢ່າງໜ້ອຍ ສອງແມັດ ເພື່ອປ້ອງກັນບໍ່ໃຫ້ມີຜົນກະທົບຕໍ່ ຄຸນນະພາບ, ປະລິມານ ນ້ຳ ແລະ ຊັບພະຍາກອນນ້ຳ ແລະ ການເຊາະເຈື່ອນຂອງຕາຝັ່ງ ລວມທັງ ຊີວະນາພັນ ທີ່ຢູ່ພື້ນນ້ຳ.

ຖ້າມີຄວາມຈຳເປັນກໍ່ສ້າງກິດຈະການໃດໜຶ່ງ ເປັນຕົ້ນ ການວາງ ທໍ່, ສາຍການໄຟຟ້າ, ສາຍໂທລະຄົມມະນາຄົມ, ການສື່ສານ ລອດດິນພື້ນນ້ຳ ຕ້ອງຂໍອະນຸຍາດຈາກ ຂະແໜງການຄຸ້ມຄອງທີ່ດິນບໍລິເວນນ້ຳ ແລະ ຂະແໜງການໂຍທາທິການ ແລະ ຂົນສົ່ງ.

**ມາດຕາ 19 ການປົກປັກຮັກສາຊີວະນານາພັນ**

ຂະແໜງການຄຸ້ມຄອງທີ່ດິນບໍລິເວນນ້ຳ ເປັນເຈົ້າການ ປະສານສົມທົບກັບ ຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ຂະແໜງການອື່ນ, ອົງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ໂດຍມີການເຂົ້າຮ່ວມຂອງປະຊາຊົນ ທີ່ຕັ້ງພູມລຳເນົາ ຢູ່ໃນ ແລະ ຕິດກັບທີ່ດິນບໍລິເວນນ້ຳ ເພື່ອປົກປັກຮັກສາຊີວະນານາພັນດ້ວຍການ ສຳຫຼວດ, ກຳນົດເຂດ, ຂຶ້ນບັນຊີ ພັນໄມ້, ພັນພືດ, ພັນສັດນ້ຳ, ພັນສັດປ່າ ແລະ ເຄື່ອງປ່າຂອງດົງ, ກຳນົດແຜນການອະນຸລັກປົກປັກຮັກສາ ແລະ ຟື້ນຟູ ຕາມຫຼັກວິທະຍາສາດ ແລະ ຕາມກົດໝາຍ.

**ມາດຕາ 20 ການຄຸ້ມຄອງ ແລະ ຫຼຸດຜ່ອນຜົນກະທົບຂອງໂຄງການລົງທຶນ**

ຂະແໜງການຄຸ້ມຄອງທີ່ດິນບໍລິເວນນ້ຳ ເປັນເຈົ້າການ ປະສານສົມທົບກັບ ຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ຂະແໜງການອື່ນ, ອົງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ແລະ ການມີສ່ວນຮ່ວມຂອງປະຊາຊົນ ທີ່ຕັ້ງພູມລຳເນົາ ຢູ່ໃນ ຫຼື ຕິດກັບເຂດໂຄງການ ເພື່ອຄຸ້ມຄອງ, ຕິດຕາມ ແລະ ກວດກາ ໂຄງການລົງທຶນຕ່າງໆ, ຮັບປະກັນການນຳໃຊ້ທີ່ດິນບໍລິເວນນ້ຳແບບຍືນຍົງ, ການແບ່ງປັນຜົນປະໂຫຍດຢ່າງເປັນທຳ, ການປະເມີນ ແລະ ຄຸ້ມຄອງຜົນກະທົບຕໍ່ສິ່ງແວດລ້ອມ, ການຈັດຕັ້ງປະຕິບັດລຳດັບມາດຕະການຫຼຸດຜ່ອນຜົນກະທົບ ແລະ ການທົດແທນຄ່າເສຍຫາຍ.

**ມາດຕາ 21 ສັນຍາອະນຸລັກ**

ອົງການຄຸ້ມຄອງທີ່ດິນບໍລິເວນນ້ຳ ສາມາດເຮັດສັນຍາອະນຸລັກກັບອົງການປົກຄອງບ້ານ ທີ່ມີພື້ນທີ່ ຢູ່ໃນ ຫຼື ຕິດກັບທີ່ດິນບໍລິເວນນ້ຳ ໂດຍມີການປະສານສົມທົບກັບຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແລະ ໄດ້ຮັບການຢັ້ງຢືນ ຂອງອົງການປົກຄອງຂັ້ນເມືອງ ເພື່ອໃຫ້ອົງການປົກຄອງບ້ານນັ້ນ ເປັນເຈົ້າການໃນການຄຸ້ມຄອງປົກປັກຮັກສາທີ່ດິນບໍລິເວນນ້ຳ.

## ໝວດທີ 3
## ການພັດທະນາ, ການຟື້ນຟູ ທີ່ດິນບໍລິເວນນ້ຳ

**ມາດຕາ 22 ການພັດທະນາ ແລະ ການຟື້ນຟູ ທີ່ດິນບໍລິເວນນ້ຳ**

ການພັດທະນາ ແລະ ການຟື້ນຟູທີ່ດິນບໍລິເວນນ້ຳ ໃຫ້ປະຕິບັດ ດັ່ງນີ້:

1. ການພັດທະນາ ແລະ ການຟື້ນຟູທີ່ດິນບໍລິເວນນ້ຳ;
2. ການພັດທະນາຊີວິດການເປັນຢູ່;
3. ການທ່ອງທ່ຽວແບບອະນຸລັກ;

4. ການສຶກສາຄົ້ນຄວ້າ;
5. ຂໍ້ມູນ ຂ່າວສານ ທີ່ດິນບໍລິເວນນໍ້າ.

**ມາດຕາ 23 ການພັດທະນາ ແລະ ການຟື້ນຟູທີ່ດິນບໍລິເວນນໍ້າ**

ການພັດທະນາທີ່ດິນບໍລິເວນນໍ້າ ແມ່ນ ການປ່ຽນແປງສະພາບດິນ, ປັບປຸງດິນ ໃຫ້ມີຄຸນນະພາບ, ມີມູນຄ່າເພີ່ມ ສົມດຸນກັບລະບົບນິເວດ ເພື່ອນໍາໃຊ້ຢ່າງມີປະສິດທິຜົນ.

ການຟື້ນຟູທີ່ດິນບໍລິເວນນໍ້າ ແມ່ນ ການເຮັດໃຫ້ສະພາບແວດລ້ອມຂອງທີ່ດິນບໍລິເວນນໍ້າທີ່ຖືກທໍາລາຍ ຫຼື ເຊື່ອມໂຊມ ມີການຟື້ນຕົວ ແລະ ໄດ້ຮັບການປ່ຽນແປງໃຫ້ຢູ່ໃນສະພາບທີ່ດີ, ລະບົບນິເວດມີຄວາມສົມດຸນ, ຊີວະນານາພັນ, ສັດນໍ້າ ແລະ ສັດປ່າ ມີຄວາມອຸດົມສົມບູນ ໂດຍຕິດພັນກັບການປັບປຸງຊີວິດການເປັນຢູ່ຂອງປະຊາຊົນ ທີ່ຕັ້ງພູມລໍາເນົາ ຢູ່ໃນ ຫຼື ຕິດກັບທີ່ດິນບໍລິເວນນໍ້າ.

**ມາດຕາ 24 ການພັດທະນາຊີວິດການເປັນຢູ່**

ຂະແໜງການຄຸ້ມຄອງທີ່ດິນບໍລິເວນນໍ້າ ປະສານສົມທົບກັບ ຂະແໜງຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ, ຂະແໜງການອື່ນ, ອົງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ຊຸກຍູ້ ແລະ ສົ່ງເສີມການພັດທະນາຊີວິດການເປັນຢູ່ຂອງປະຊາຊົນທີ່ຕັ້ງພູມລໍາເນົາ ຢູ່ໃນ ຫຼື ຕິດກັບທີ່ດິນບໍລິເວນນໍ້າ ໃຫ້ມີຊີວິດການເປັນຢູ່ທີ່ດີຂຶ້ນ ດ້ວຍການຈັດສັນດິນ ທີ່ຢູ່ຕັ້ງພູມລໍາເນົາ ແລະ ເຂດທໍາການຜະລິດແບບຄົງທີ່, ຊຸກຍູ້ ແລະ ສົ່ງເສີມ ການຜະລິດເປັນສິນຄ້າ ແລະ ສ້າງເສດຖະກິດຮ່ວມມີຮູບແບບຕ່າງໆ ທີ່ເປັນມິດກັບສິ່ງແວດລ້ອມ ແລະ ຕາມທ່າແຮງຂອງແຕ່ລະທ້ອງຖິ່ນ ເປັນຕົ້ນ ການປູກພືດກະສິກໍາ, ລ້ຽງສັດ, ການປະມົງ, ປູກຕົ້ນໄມ້, ເຄື່ອງປ່າຂອງດົງ, ຫັດຖະກໍາ ແລະ ການບໍລິການອື່ນ.

**ມາດຕາ 25 ການທ່ອງທ່ຽວແບບອະນຸລັກ**

ຂະແໜງການຄຸ້ມຄອງທີ່ດິນບໍລິເວນນໍ້າ ປະສານສົມທົບກັບ ຂະແໜງການຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ, ຂະແໜງການອື່ນ, ອົງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ເພື່ອດໍາເນີນການສໍາຫຼວດ, ວາງແຜນຈັດສັນ, ຄຸ້ມຄອງ ແລະ ພັດທະນາການທ່ອງທ່ຽວແບບອະນຸລັກ ພ້ອມທັງດໍາເນີນການຕິດຕາມ ແລະ ກວດກາ ກິດຈະການທ່ອງທ່ຽວດັ່ງກ່າວ ໃນທີ່ດິນບໍລິເວນນໍ້າ.

**ມາດຕາ 26 ການສຶກສາຄົ້ນຄວ້າ**

ຂະແໜງການຄຸ້ມຄອງທີ່ດິນບໍລິເວນນໍ້າ ອະນຸຍາດໃຫ້ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ດໍາເນີນການສຶກສາຄົ້ນຄວ້າ, ວິໄຈທາງດ້ານວິທະຍາສາດ ເປັນຕົ້ນ ແມງໄມ້, ພັນສັດນໍ້າ, ພັນສັດປ່າ, ພັນພືດ ແລະ ເຄື່ອງປ່າຂອງດົງ, ດິນຖ່ານຫີນ, ດິນດໍາ, ດິນດາກ, ດິນຊາຍ, ຮ່ອງຮອຍປະຫວັດສາດ, ວັດທະນະທໍາ, ມວນສານທາດອາຍກາກບອນ ໃນພື້ນທີ່ທີ່ດິນບໍລິເວນນໍ້າ ຊຶ່ງຜູ້ໄດ້ຮັບອະນຸຍາດຕ້ອງປະຕິບັດ ຕາມກົດໝາຍທີ່ກ່ຽວຂ້ອງ ແລະ ລາຍງານຜົນການສຶກສາຄົ້ນຄວ້າ ຢ່າງເປັນລາຍລັກອັກສອນໃຫ້ແກ່ຂະແໜງການຄຸ້ມຄອງທີ່ດິນບໍລິເວນນໍ້າ ພາຍໃນເວລາ ຫົກສິບວັນ ນັບແຕ່ວັນ ໄດ້ສຶກສາຄົ້ນຄວ້າສໍາເລັດ ເປັນຕົ້ນໄປ.

**ມາດຕາ 27 ຂໍ້ມູນ ຂ່າວສານ ທີ່ດິນບໍລິເວນນໍ້າ**

ຂະແໜງການຄຸ້ມຄອງທີ່ດິນບໍລິເວນນໍ້າ ເປັນເຈົ້າການສ້າງ, ພັດທະນາ, ຄຸ້ມຄອງ, ປັບປຸງ ແລະ ນຳໃຊ້ ຂໍ້ມູນ ຂ່າວສານ ກ່ຽວກັບທີ່ດິນບໍລິເວນນໍ້າ ໂດຍເຊື່ອມຕໍ່ກັບຖານຂໍ້ມູນ ຂ່າວສານຂອງຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ.

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ສາມາດເຂົ້າເຖິງ ແລະ ນຳໃຊ້ຂໍ້ມູນ ຂ່າວສານ ທີ່ດິນບໍລິເວນນໍ້າ ໂດຍເສຍຄ່າທຳນຽມ ແລະ ຄ່າບໍລິການ ຕາມລະບຽບການ.

## ໝວດທີ 4
## ການນຳໃຊ້ທີ່ດິນບໍລິເວນນໍ້າ

**ມາດຕາ 28 ການນຳໃຊ້ທີ່ດິນບໍລິເວນນໍ້າ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຈຸດປະສົງນຳໃຊ້ທີ່ດິນບໍລິເວນນໍ້າ ຕ້ອງຂໍອະນຸຍາດນຳຂະແໜງການຄຸ້ມຄອງທີ່ດິນບໍລິເວນນໍ້າ ແລະ ຕ້ອງຮັບປະກັນໃຫ້ມີຜົນກະທົບໜ້ອຍທີ່ສຸດ ຕໍ່ປະລິມານ, ຄຸນນະພາບຂອງ ນໍ້າ, ດິນ, ຊີວະນາໆພັນ ແລະ ສິ່ງແວດລ້ອມ.

ການນຳໃຊ້ທີ່ດິນບໍລິເວນນໍ້າ ຕ້ອງຮັບປະກັນເງື່ອນໄຂ ດັ່ງນີ້:

1. ບໍ່ໃຫ້ມີການເຊາະເຈື່ອນ;
2. ບໍ່ໃຫ້ຕັນທາງນໍ້າໄຫຼ;
3. ບໍ່ໃຫ້ນໍ້າຕື້ນເຂີນ ຫຼື ອັ່ງຖ້ວມ;
4. ບໍ່ໃຫ້ຖິ້ມສິ່ງເສດເຫຼືອ ແລະ ສິ່ງເປັນພິດລົງສູ່ແຫຼ່ງນໍ້າ;
5. ບໍ່ໃຫ້ຕັດຕົ້ນໄມ້ທຳລາຍປ່າໃນເຂດແຫຼ່ງນໍ້າ;
6. ບໍ່ໃຫ້ຂຸດລອກເອົາ ດິນຖ່ານຕົມ, ດິນດຳ, ດິນດາກ, ດິນຊາຍ ແລະ ດິນອື່ນ.

ໃນກໍລະນີ ມີຄວາມຈຳເປັນນຳໃຊ້ ທີ່ດິນດັ່ງກ່າວນັ້ນ ຕ້ອງໄດ້ຂໍອະນຸຍາດນຳຂະແໜງການຄຸ້ມຄອງທີ່ດິນບໍລິເວນນໍ້າ.

**ມາດຕາ 29 ປະເພດການນຳໃຊ້ທີ່ດິນບໍລິເວນນໍ້າ**

ການນຳໃຊ້ທີ່ດິນບໍລິເວນນໍ້າ ແບ່ງອອກເປັນປະເພດ ດັ່ງນີ້:

1. ການນຳໃຊ້ເພື່ອສາທາລະນະປະໂຫຍດ;
2. ການນຳໃຊ້ເພື່ອຄອບຄົວ;
3. ການນຳໃຊ້ຕາມປະເພນີ;
4. ການນຳໃຊ້ເພື່ອທຸລະກິດ.

**ມາດຕາ 30 ການນຳໃຊ້ເພື່ອສາທາລະນະປະໂຫຍດ**

ການນຳໃຊ້ເພື່ອສາທາລະນະປະໂຫຍດ ແມ່ນ ການນຳໃຊ້ທີ່ດິນບໍລິເວນນໍ້າ ເພື່ອຜົນປະໂຫຍດຂອງປະຊາຊົນ, ຊຸມຊົນ ແລະ ສັງຄົມ ເຊັ່ນ ການສຶກສາຄົ້ນຄວ້າ, ການອະນຸລັກລະບົບນິເວດທີ່ດິນບໍລິເວນນໍ້າ ແລະ ຊີວະນາໆພັນ, ການຊື້ ຂາຍສິນເຊື່ອກາກບອນ, ການຈ່າຍຄ່າບໍລິການດ້ານສິ່ງແວດລ້ອມ, ການທ່ອງທ່ຽວແບບອະນຸລັກ ແລະ ການພັກຜ່ອນ, ການປົກປັກຮັກສາສະຖານທີ່ ທີ່ມີຄວາມສຳຄັນ ແລະ ມີຄຸນຄ່າທາງປະຫວັດສາດ, ວັດທະນະທຳ ຊຶ່ງການນຳໃຊ້ນັ້ນຕ້ອງປະຕິບັດລຳດັບມາດຕະການຫຼຸດຜ່ອນຜົນກະທົບ ແລະ ສອດຄ່ອງກັບ

ແຜນແມ່ບົດຈັດສັນທີ່ດິນແຫ່ງຊາດ, ແຜນຍຸດທະສາດການຄຸ້ມຄອງ, ການບໍລິຫານ ແລະ ການນໍາໃຊ້ນໍ້າ ແລະ ຊັບພະຍາກອນນໍ້າ, ແຜນການນໍາໃຊ້ທີ່ດິນຂອງຂະແໜງການ, ແຜນພັດທະນາເສດຖະກິດ-ສັງຄົມຂອງທ້ອງຖິ່ນ ແລະ ແຜນຄຸ້ມຄອງອ່າງຮັບນໍ້າ.

**ມາດຕາ 31 ການນໍາໃຊ້ເພື່ອຄອບຄົວ**

ການນໍາໃຊ້ເພື່ອຄອບຄົວ ແມ່ນ ການນໍາໃຊ້ທີ່ດິນບໍລິເວນນໍ້າ ເຂົ້າໃນການປູກຝັງ, ລ້ຽງສັດ, ການປະມົງ ເພື່ອຄອບຄົວ ທີ່ບໍ່ມີຈຸດປະສົງທາງການຄ້າ ລວມທັງການນໍາໃຊ້ເຄື່ອງປ່າຂອງດົງ ເປັນອາຫານ, ຊົມໃຊ້ໃນຊີວິດ ປະຈໍາວັນ ຊຶ່ງການນໍາໃຊ້ດັ່ງກ່າວ ຕ້ອງດໍາເນີນໃນເຂດທີ່ລັດຈັດສັນໃຫ້ເທົ່ານັ້ນ.

**ມາດຕາ 32 ການນໍາໃຊ້ຕາມປະເພນີ**

ການນໍາໃຊ້ຕາມປະເພນີ ແມ່ນ ການນໍາໃຊ້ທີ່ດິນບໍລິເວນນໍ້າ ຈັດງານບຸນປະເພນີ, ພິທີກໍາທາງສາສະໜາ ແລະ ກິດຈະກໍາອື່ນ ຢ່າງເປັນປົກກະຕິ ແລະ ຕໍ່ເນື່ອງກັນມາ ຊຶ່ງການນໍາໃຊ້ດັ່ງກ່າວ ຕ້ອງດໍາເນີນໃນເຂດທີ່ລັດ ຈັດສັນໃຫ້ເທົ່ານັ້ນ.

**ມາດຕາ 33 ການນໍາໃຊ້ເພື່ອທຸລະກິດ**

ການນໍາໃຊ້ເພື່ອທຸລະກິດ ແມ່ນ ການນໍາໃຊ້ທີ່ດິນບໍລິເວນນໍ້າເຂົ້າໃນ ການທ່ອງທ່ຽວ, ສະຖານທີ່ພັກຜ່ອນ, ການຄ້າ, ການບໍລິການ, ການບໍລິການດ້ານລະບົບນິເວດ, ການຊື້ ຂາຍສິນເຊື່ອກາກບອນ, ການຖ່າຍທໍາຮູບເງົາ, ສາລະຄະດີ ແລະ ກິດຈະການອື່ນ ບົນພື້ນຖານການນໍາໃຊ້ແບບຍືນຍົງ, ປະຕິບັດລໍາດັບມາດຕະການຫຼຸດຜ່ອນ ຜົນກະທົບ ແລະ ສອດຄ່ອງກັບແຜນແມ່ບົດຈັດສັນທີ່ດິນແຫ່ງຊາດ, ແຜນຍຸດທະສາດການຄຸ້ມຄອງ, ການ ບໍລິຫານ ແລະ ການນໍາໃຊ້ນໍ້າ ແລະ ຊັບພະຍາກອນນໍ້າ, ແຜນການນໍາໃຊ້ທີ່ດິນຂອງຂະແໜງການ, ແຜນ ພັດທະນາເສດຖະກິດ-ສັງຄົມຂອງທ້ອງຖິ່ນ, ແຜນຄຸ້ມຄອງອ່າງຮັບນໍ້າ ແລະ ປະຕິບັດຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 34 ສິດ ຂອງຜູ້ນໍາໃຊ້ທີ່ດິນບໍລິເວນນໍ້າ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ຮັບອະນຸຍາດນໍາໃຊ້ທີ່ດິນບໍລິເວນນໍ້າ ມີສິດ ດັ່ງນີ້:

1. ນໍາໃຊ້ທີ່ດິນບໍລິເວນນໍ້າໃນຂອບເຂດເນື້ອທີ່ ແລະ ໄລຍະເວລາທີ່ໄດ້ຮັບອະນຸຍາດ ໂດຍສອດຄ່ອງກັບ ແຜນການນໍາໃຊ້ທີ່ດິນບໍລິເວນນໍ້າ ແລະ ລະບຽບການທີ່ກ່ຽວຂ້ອງ;
2. ໄດ້ຮັບໝາກຜົນຈາກການນໍາໃຊ້ທີ່ດິນບໍລິເວນນໍ້າ;
3. ໄດ້ຮັບການປົກປ້ອງຜົນປະໂຫຍດຈາກການນໍາໃຊ້, ປົກປັກຮັກສາ, ພັດທະນາ ແລະ ຟື້ນຟູທີ່ດິນ ບໍລິເວນນໍ້າ;
4. ໄດ້ຮັບນະໂຍບາຍສົ່ງເສີມການຜະລິດ, ການລົງທຶນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງ;
5. ນໍາໃຊ້ສິດອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 35 ພັນທະ ຂອງຜູ້ນຳໃຊ້ທີ່ດິນບໍລິເວນນ້ຳ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ຮັບອະນຸຍາດນຳໃຊ້ທີ່ດິນບໍລິເວນນ້ຳ ມີພັນທະ ດັ່ງນີ້:

1. ນຳໃຊ້ທີ່ດິນບໍລິເວນນ້ຳ ໃຫ້ຖືກຕ້ອງຕາມເປົ້າໝາຍທີ່ໄດ້ຮັບອະນຸຍາດ ແລະ ສອດຄ່ອງກັບແຜນການນຳໃຊ້ທີ່ດິນບໍລິເວນນ້ຳ ແລະ ລະບຽບການ;
2. ປົກປັກຮັກສາ ແລະ ພັດທະນາທີ່ດິນບໍລິເວນນ້ຳ ໃຫ້ຢູ່ໃນສະພາບດີ, ບໍ່ໃຫ້ມີການເຊາະເຈື່ອນ, ຍຸບລົງ, ເສື່ອມໂຊມ, ບໍ່ສ້າງຄວາມເສຍຫາຍຕໍ່ທີ່ດິນບໍລິເວນນ້ຳ ແລະ ບໍ່ສ້າງຜົນກະທົບອັນບໍ່ດີຕໍ່ສິ່ງແວດລ້ອມ;
3. ທົດແທນຄ່າເສຍຫາຍທີ່ຕົນໄດ້ກໍ່ຂຶ້ນ;
4. ຈ່າຍຄ່າສຳລັບການຈັດຕັ້ງປະຕິບັດລຳດັບມາດຕະການຫຼຸດຜ່ອນຜົນກະທົບ, ຄ່າທຳນຽມ, ຄ່າບໍລິການ ແລະ ພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ;
5. ໃຫ້ການຮ່ວມມື ແລະ ອຳນວຍຄວາມສະດວກແກ່ເຈົ້າໜ້າທີ່ທີ່ກ່ຽວຂ້ອງຂອງລັດ ໃນການຄຸ້ມຄອງ ແລະ ຕິດຕາມກວດກາ ທີ່ດິນບໍລິເວນນ້ຳ;
6. ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

# ພາກທີ IV
# ການຫັນປ່ຽນ, ການປ່ຽນແປງ, ການເຊົ່າ ຫຼື ສຳປະທານທີ່ດິນບໍລິເວນນ້ຳ

**ມາດຕາ 36 ການຫັນປ່ຽນທີ່ດິນບໍລິເວນນ້ຳ**

ການຫັນປ່ຽນທີ່ດິນບໍລິເວນນ້ຳ ເປັນທີ່ດິນປະເພດອື່ນ ຈະດຳເນີນໄດ້ກໍຕໍ່ເມື່ອ ຫາກເຫັນວ່າມີຄວາມຈຳເປັນນຳໃຊ້ເຂົ້າໃນເປົ້າໝາຍອື່ນ ເພື່ອຮັບໃຊ້ຜົນປະໂຫຍດສູງສຸດຂອງຊາດ ແລະ ຊີວິດການເປັນຢູ່ຂອງປະຊາຊົນ ໂດຍສອດຄ່ອງກັບແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນແມ່ບົດຈັດສັນທີ່ດິນແຫ່ງຊາດ, ແຜນຍຸດທະສາດການຄຸ້ມຄອງ, ການບໍລິຫານ ແລະ ການນຳໃຊ້ນ້ຳ ແລະ ຊັບພະຍາກອນນ້ຳ ແລະ ແຜນການນຳໃຊ້ທີ່ດິນຂອງຂະແໜງການ.

ການຫັນປ່ຽນທີ່ດິນບໍລິເວນນ້ຳ ເປັນທີ່ດິນປະເພດອື່ນ ໃຫ້ປະຕິບັດຕາມກົດໝາຍວ່າດ້ວຍທີ່ດິນ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ.

**ມາດຕາ 37 ການປ່ຽນແປງທີ່ດິນບໍລິເວນນ້ຳ**

ໃນກໍລະນີທີ່ມີຄວາມຈຳເປັນໃນການປ່ຽນແປງທີ່ດິນບໍລິເວນນ້ຳ ເປັນຕົ້ນ ການຖົມ, ຂຸດ, ຈົກ, ຂະຫຍາຍ, ຕັນ, ອ່ວຍ ແລະ ກິດຈະກຳອື່ນ ທີ່ເຮັດໃຫ້ທີ່ດິນບໍລິເວນນ້ຳມີການປ່ຽນແປງ ຕ້ອງໄດ້ຮັບອະນຸຍາດ ຈາກຂະແໜງການຄຸ້ມຄອງທີ່ດິນບໍລິເວນນ້ຳ ບົນພື້ນຖານການປະສານສົມທົບກັບ ຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ຂະແໜງການອື່ນ, ອົງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ.

**ມາດຕາ 38 ການເຊົ່າ ຫຼື ສຳປະທານທີ່ດິນບໍລິເວນນ້ຳ**

ການເຊົ່າ ຫຼື ສຳປະທານທີ່ດິນບໍລິເວນນ້ຳ ແມ່ນ ການນຳໃຊ້ທີ່ດິນບໍລິເວນນ້ຳ ເພື່ອການທ່ອງທ່ຽວ, ສະຖານທີ່ພັກຜ່ອນ, ການຄ້າ, ການບໍລິການ, ການບໍລິການດ້ານລະບົບນິເວດ, ການຖ່າຍທຳຮູບເງົາ, ສາລະຄະດີ ແລະ ກິດຈະການອື່ນ.

ການເຊົ່າ ຫຼື ສຳປະທານທີ່ດິນບໍລິເວນນ້ຳ ຕ້ອງດຳເນີນໃນເຂດທີ່ໄດ້ຈັດສັນໄວ້ເທົ່ານັ້ນ ແລະ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ສຳຫຼວດ, ສຶກສາ ຂໍ້ມູນ ກ່ຽວກັບສະພາບເສດຖະກິດ-ສັງຄົມ, ຄວາມເໝາະສົມທາງທຳມະຊາດ ແລະ ກິດຈະການທີ່ຈະດຳເນີນ;

2. ຜູ້ເຊົ່າ ຫຼື ສຳປະທານ ຕ້ອງດຳເນີນການສ້າງບົດວິພາກເສດຖະກິດ-ເຕັກນິກ, ການສຶກສາເບື້ອງຕົ້ນກ່ຽວກັບຜົນກະທົບຕໍ່ສິ່ງແວດລ້ອມ ແລະ/ຫຼື ການປະເມີນຜົນກະທົບຕໍ່ສິ່ງແວດລ້ອມແບບລະອຽດ ລວມທັງສ້າງແຜນຄຸ້ມຄອງຕິດຕາມກວດກາສິ່ງແວດລ້ອມ ແລະ ມາດຕະການຫຼຸດຜ່ອນຜົນກະທົບທີ່ເໝາະສົມ ໂດຍຜ່ານການຢັ້ງຢືນ ແລະ ຮັບຮອງ ຈາກຂະແໜງການທີ່ກ່ຽວຂ້ອງຕາມທີ່ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ;

3. ສ້າງແຜນດຳເນີນງານໂດຍເລັ່ງໃສ່ການປົກປັກຮັກສາແຫຼ່ງນ້ຳ ແລະ ສິ່ງແວດລ້ອມ, ການບຸກເບີກເນື້ອທີ່, ການພັດທະນາບ້ານ, ການສົ່ງເສີມການມີສ່ວນຮ່ວມຂອງປະຊາຊົນ ໃນການດຳເນີນການຜະລິດ, ການນຳໃຊ້ເຕັກໂນໂລຊີ ຕະຫຼອດເຖິງການແບ່ງປັນຜົນປະໂຫຍດ.

ຫຼັງຈາກລັດຖະບານ ຫຼື ອົງການປົກຄອງຂັ້ນແຂວງ ອະນຸຍາດໃຫ້ເຊົ່າ ຫຼື ສຳປະທານ ທີ່ດິນບໍລິເວນນ້ຳແລ້ວ ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຂັ້ນແຂວງ ບ່ອນທີ່ດິນບໍລິເວນນ້ຳຕັ້ງຢູ່ ອອກໃບຕາດິນລັດ ໂດຍອີງຕາມກຳນົດເວລາເຊົ່າ ຫຼື ສຳປະທານ.

### ມາດຕາ 39 ພັນທະ ຂອງຜູ້ເຊົ່າ ຫຼື ສຳປະທານ ທີ່ດິນບໍລິເວນນ້ຳ

ຜູ້ເຊົ່າ ຫຼື ຜູ້ສຳປະທານ ທີ່ດິນບໍລິເວນນ້ຳ ມີພັນທະ ດັ່ງນີ້:

1. ຈັດຕັ້ງປະຕິບັດກົດໝາຍ, ລະບຽບການ ແລະ ແຜນການນຳໃຊ້ທີ່ດິນຂອງຂະແໜງການ ໃຫ້ຖືກຕ້ອງຕາມຈຸດປະສົງ ແລະ ເປົ້າໝາຍ;
2. ຈ່າຍຄ່າເຊົ່າ ຫຼື ຄ່າສຳປະທານ ທີ່ດິນບໍລິເວນນ້ຳ, ຄ່າຊັບພະຍາກອນທຳມະຊາດ, ພາສີ, ອາກອນ, ຄ່າທຳນຽມ, ຄ່າບໍລິການ;
3. ທົດແທນຄ່າເສຍຫາຍໃຫ້ແກ່ຜູ້ໄດ້ຮັບຜົນກະທົບ ຈາກການດຳເນີນກິດຈະການຂອງຕົນ;
4. ປະຕິບັດພັນທະດ້ານສິ່ງແວດລ້ອມ ຕາມກົດໝາຍ ແລະ ລະບຽບການ;
5. ປະຕິບັດລຳດັບມາດຕະການຫຼຸດຜ່ອນຜົນກະທົບ;
6. ປະຕິບັດທາດສະພາບຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ;
7. ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

## ພາກທີ V
## ການມີສ່ວນຮ່ວມຂອງສັງຄົມ

### ມາດຕາ 40 ການມີສ່ວນຮ່ວມຂອງສັງຄົມ

ການມີສ່ວນຮ່ວມຂອງສັງຄົມ ແມ່ນ ຂະບວນການປຶກສາຫາລື, ການສະໜອງຂໍ້ມູນ ຂ່າວສານ ແລະ ການຮັບຄຳຄິດຄຳເຫັນ ຂອງທຸກພາກສ່ວນໃນສັງຄົມ ໃນການຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ທີ່ດິນບໍລິເວນນ້ຳ ພ້ອມທັງ ຕິດຕາມ ກວດກາ ການຈັດຕັ້ງປະຕິບັດວຽກງານຄຸ້ມຄອງການນຳໃຊ້ທີ່ດິນບໍລິເວນນ້ຳ ເພື່ອຮັບປະກັນຄວາມໂປ່ງໃສ, ຍຸຕິທຳ ແລະ ມີປະສິດທິຜົນ.

ຂະແໜງການຄຸ້ມຄອງທີ່ດິນບໍລິເວນນ້ຳ, ອົງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ຕ້ອງສ້າງເງື່ອນໄຂໃຫ້ທຸກພາກສ່ວນໃນສັງຄົມ ເປັນຕົ້ນ ແມ່ຍິງ ແລະ ຜູ້ທີ່ດ້ອຍໂອກາດ ມີສ່ວນຮ່ວມໃນການຄຸ້ມຄອງ, ການນຳໃຊ້ ທີ່ດິນບໍລິເວນນ້ຳ ເພື່ອຮັບປະກັນການປັບປຸງຊີວິດການເປັນຢູ່ຂອງເຂົາເຈົ້າໃຫ້ດີຂຶ້ນ.

**ມາດຕາ 41 ການປູກຈິດສຳນຶກ**

ການປູກຈິດສຳນຶກ ແມ່ນ ການສຶກສາອົບຮົມ ແລະ ໂຄສະນາເຜີຍແຜ່ ຄວາມໝາຍ ແລະ ຄວາມສຳຄັນຂອງວຽກງານທີ່ດິນບໍລິເວນນ້ຳ ໃຫ້ສັງຄົມຮັບຮູ້ຢ່າງທົ່ວເຖິງ ໂດຍຜ່ານສື່ມວນຊົນ, ກຳນົດເຂົ້າໃນຫຼັກສູດການຮຽນ-ການສອນ, ຊຸກຍູ້ ແລະ ສົ່ງເສີມ ການສ້າງກິດຈະກຳຕ່າງໆກ່ຽວກັບ ວຽກງານຄຸ້ມຄອງທີ່ດິນບໍລິເວນນ້ຳ ເພື່ອໃຫ້ທຸກຄົນຮັບຮູ້ ແລະ ເຂົ້າໃຈ ຄວາມໝາຍ ແລະ ຄວາມສຳຄັນ ຂອງທີ່ດິນບໍລິເວນນ້ຳ ດ້ວຍການເປັນເຈົ້າການຂອງທຸກຂະແໜງການ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ການເຂົ້າຮ່ວມທຸກພາກສ່ວນທົ່ວສັງຄົມ.

# ພາກທີ VI
# ການຄຸ້ມຄອງ ແລະ ກວດກາ ວຽກງານທີ່ດິນບໍລິເວນນ້ຳ

**ມາດຕາ 42 ການຄຸ້ມຄອງ ແລະ ກວດກາ ວຽກງານທີ່ດິນບໍລິເວນນ້ຳ**

ຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ຂະແໜງການຄຸ້ມຄອງທີ່ດິນບໍລິເວນນ້ຳ ເປັນຜູ້ຄຸ້ມຄອງ ແລະ ກວດກາ ວຽກງານທີ່ດິນບໍລິເວນນ້ຳ ໂດຍກົງ ແລະ ເປັນເຈົ້າການ ປະສານສົມທົບກັບຂະແໜງການ, ອົງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ຈັດຕັ້ງປະຕິບັດ.

**ມາດຕາ 43 ສິດ ແລະ ໜ້າທີ່ ຂອງຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ**

ຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ມີສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຄົ້ນຄວ້າ, ສ້າງ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ ແລະ ລະບຽບການ ກ່ຽວກັບທີ່ດິນບໍລິເວນນ້ຳ ເພື່ອສະເໜີຕໍ່ລັດຖະບານ ພິຈາລະນາ;
2. ຜັນຂະຫຍາຍ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ ແລະ ລະບຽບການ ກ່ຽວກັບທີ່ດິນບໍລິເວນນ້ຳ ມາເປັນ ແຜນການ, ແຜນງານ, ໂຄງການ ຂອງຕົນ ພ້ອມທັງຈັດຕັ້ງປະຕິບັດ;
3. ໂຄສະນາ ເຜີຍແຜ່, ສຶກສາອົບຮົມນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ, ແຜນການ, ແຜນງານ, ໂຄງການ ກ່ຽວກັບວຽກງານທີ່ດິນບໍລິເວນນ້ຳ;
4. ຄຸ້ມຄອງ, ປົກປັກຮັກສາ, ພັດທະນາ, ນຳໃຊ້ ແລະ ຕິດຕາມ ກວດກາ ການຈັດຕັ້ງປະຕິບັດວຽກງານທີ່ດິນບໍລິເວນນ້ຳ ໃນຂອບເຂດທົ່ວປະເທດ;
5. ຂຶ້ນບັນຊີທີ່ດິນບໍລິເວນນ້ຳ ຢ່າງລວມສູນ;
6. ຄົ້ນຄວ້າ ວິທະຍາສາດ ແລະ ເຕັກໂນໂລຊີດ້ານການປົກປັກຮັກສາ ແລະ ຟື້ນຟູ ທີ່ດິນບໍລິເວນນ້ຳ;
7. ກຳນົດຂອບເຂດເນື້ອທີ່ ຂອງທີ່ດິນບໍລິເວນນ້ຳ ເພື່ອນຳສະເໜີຂັ້ນເທິງ ພິຈາລະນາ;
8. ຕິດຕາມ ກວດກາ ການນຳໃຊ້ທີ່ດິນບໍລິເວນນ້ຳ;
9. ສ້າງ, ບຳລຸງ, ຍົກລະດັບ ບຸກຄະລາກອນ ກ່ຽວກັບວຽກງານທີ່ດິນບໍລິເວນນ້ຳ;
10. ຮັບ ແລະ ພິຈາລະນາແກ້ໄຂຄຳສະເໜີຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ກ່ຽວກັບທີ່ດິນບໍລິເວນນ້ຳ;

11. ປະສານສົມທົບກັບ ຂະແໜງການ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນ ທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດວຽກງານທີ່ດິນບໍລິເວນນ້ຳ

12. ພົວພັນ ແລະ ຮ່ວມມື ກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານທີ່ດິນບໍລິເວນນ້ຳ;

13. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານທີ່ດິນບໍລິເວນນ້ຳຕໍ່ຂັ້ນເທິງ ຢ່າງເປັນປົກກະຕິ;

14. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 44 ສິດ ແລະ ໜ້າທີ່ ຂອງຂະແໜງການຄຸ້ມຄອງດິນບໍລິເວນນ້ຳ**

ຂະແໜງການຄຸ້ມຄອງດິນບໍລິເວນນ້ຳ ມີສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຄົ້ນຄວ້າ, ສ້າງ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ ແລະ ລະບຽບການ ກ່ຽວກັບທີ່ດິນບໍລິເວນນ້ຳ ເພື່ອສະເໜີຕໍ່ລັດຖະບານ ພິຈາລະນາ;

2. ຜັນຂະຫຍາຍ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ ແລະ ລະບຽບການ ກ່ຽວກັບທີ່ດິນບໍລິເວນນ້ຳ ມາເປັນ ແຜນການ, ແຜນງານ, ໂຄງການ ຂອງຕົນ ພ້ອມທັງຈັດຕັ້ງປະຕິບັດ;

3. ໂຄສະນາ ເຜີຍແຜ່, ສຶກສາອົບຮົມນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ, ແຜນການ, ແຜນງານ, ໂຄງການ ກ່ຽວກັບວຽກງານທີ່ດິນບໍລິເວນນ້ຳ;

4. ຄຸ້ມຄອງ, ປົກປັກຮັກສາ, ພັດທະນາ, ນຳໃຊ້ ແລະ ຕິດຕາມ ກວດກາ ການຈັດຕັ້ງປະຕິບັດວຽກງານທີ່ດິນບໍລິເວນນ້ຳ;

5. ຄົ້ນຄວ້າວິທະຍາສາດ ແລະ ເຕັກໂນໂລຊີ ກ່ຽວກັບການຄຸ້ມຄອງ, ປົກປັກຮັກສາ, ຟື້ນຟູ ແລະ ພັດທະນາ ທີ່ດິນບໍລິເວນນ້ຳ;

6. ກຳນົດທີ່ດິນບໍລິເວນນ້ຳ ສະເໜີຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເພື່ອນຳສະເໜີຂັ້ນເທິງ ພິຈາລະນາຮັບຮອງ;

7. ຄົ້ນຄວ້າ ແລະ ນຳສະເໜີຂັ້ນເທິງ ພິຈາລະນາຕົກລົງ ການເຊົ່າ ຫຼື ສຳປະທານ ແລະ ຫັນປ່ຽນທີ່ດິນບໍລິເວນນ້ຳ ໄປເປັນທີ່ດິນປະເພດອື່ນ ຕາມກົດໝາຍ ແລະ ລະບຽບການ;

8. ຕິດຕາມ ກວດກາ ການນຳໃຊ້ທີ່ດິນບໍລິເວນນ້ຳ;

9. ຮັບ ແລະ ພິຈາລະນາແກ້ໄຂຄຳສະເໜີຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ກ່ຽວກັບທີ່ດິນບໍລິເວນນ້ຳ;

10. ປະສານສົມທົບກັບ ຂະແໜງການ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດທີ່ດິນບໍລິເວນນ້ຳ;

11. ພົວພັນ ແລະ ຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານທີ່ດິນບໍລິເວນນ້ຳ;

12. ສະຫຼຸບ ແລະ ລາຍງານການຈັດຕັ້ງປະຕິບັດວຽກງານທີ່ດິນບໍລິເວນນ້ຳຕໍ່ຂັ້ນເທິງ ຢ່າງເປັນປົກກະຕິ;

13. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 45 ສິດ ແລະ ໜ້າທີ່ ຂອງຂະແໜງການ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນ**

ຂະແໜງການ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນ ມີສິດ ແລະ ໜ້າທີ່ ປະສານສົມທົບ ແລະ ຮ່ວມມືກັບອົງການຄຸ້ມຄອງ ແລະ ກວດກາ ວຽກງານທີ່ດິນບໍລິເວນນ້ຳ ຕາມພາລະບົດບາດ ແລະ ຄວາມຮັບຜິດຊອບຂອງຕົນ.

**ມາດຕາ 46 ເນື້ອໃນການກວດກາ**

ການກວດກາ ວຽກງານທີ່ດິນບໍລິເວນນໍ້າ ມີເນື້ອໃນ ດັ່ງນີ້:

1. ການປະຕິບັດນິຕິກຳ ກ່ຽວກັບທີ່ດິນບໍລິເວນນໍ້າ;
2. ການປະຕິບັດໜ້າທີ່ຂອງ ພະນັກງານ-ລັດຖະກອນ;
3. ການສ້າງ ແລະ ປະຕິບັດແຜນການ ກ່ຽວກັບວຽກງານທີ່ດິນບໍລິເວນນໍ້າ;
4. ເນື້ອໃນອື່ນ ທີ່ເຫັນວ່າມີຄວາມຈຳເປັນ.

**ມາດຕາ 47 ຮູບການການກວດກາ**

ການກວດກາ ມີ ສາມ ຮູບການ ດັ່ງນີ້:

1. ການກວດກາຕາມປົກກະຕິ ຊຶ່ງແມ່ນ ການກວດກາທີ່ດຳເນີນໄປຕາມແຜນການ ຢ່າງເປັນປະຈຳ ແລະ ມີກຳນົດເວລາອັນແນ່ນອນ;

2. ການກວດກາໂດຍມີການແຈ້ງໃຫ້ຊາບລ່ວງໜ້າ ຊຶ່ງແມ່ນ ການກວດການອກແຜນ ເມື່ອເຫັນວ່າມີຄວາມຈຳເປັນ ໂດຍແຈ້ງໃຫ້ເປົ້າໝາຍທີ່ຖືກກວດກາຊາບລ່ວງໜ້າ;

3. ການກວດກາແບບກະທັນຫັນ ຊຶ່ງແມ່ນ ການກວດກາໂດຍຮີບດ່ວນ ທີ່ບໍ່ໄດ້ແຈ້ງໃຫ້ເປົ້າໝາຍຖືກກວດກາຊາບລ່ວງໜ້າ.

ການກວດກາ ໃຫ້ປະຕິບັດຕາມກົດໝາຍຢ່າງເຂັ້ມງວດ.

## ພາກທີ VII
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 48 ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຜົນງານດີເດັ່ນ ໃນການປະຕິບັດດຳລັດສະບັບນີ້ ເປັນຕົ້ນ ການເປັນແບບຢ່າງ, ການປະກອບສ່ວນຢ່າງຕັ້ງໜ້າ ໃນການຈັດຕັ້ງປະຕິບັດວຽກງານທີ່ດິນບໍລິເວນນໍ້າ ຖືກຕ້ອງຕາມເປົ້າໝາຍ ແລະ ມີປະສິດທິຜົນ ຈະໄດ້ຮັບການຍ້ອງຍໍ ຫຼື ນະໂຍບາຍອື່ນຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 49 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ລະເມີດດຳລັດສະບັບນີ້ ຈະຖືກສຶກສາອົບຮົມ, ກ່າວເຕືອນ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງ ຫຼື ລົງໂທດທາງອາຍາ ຕາມກົດໝາຍ.

## ພາກທີ VIII
## ບົດບັນຍັດສຸດທ້າຍ

**ມາດຕາ 50 ການຈັດຕັ້ງປະຕິບັດ**

ກະຊວງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແລະ ກະຊວງການຄຸ້ມຄອງທີ່ດິນບໍລິເວນນ້ຳ ເປັນເຈົ້າການຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດດຳລັດສະບັບນີ້ ໃຫ້ມີປະສິດທິຜົນ.

ກະຊວງການ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດ ດຳລັດສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 51 ຜົນສັກສິດ**

ດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນທີ 01 ກຸມພາ 2024 ເປັນຕົ້ນໄປ.

ຕາງໜ້າ ລັດຖະບານ ແຫ່ງ ສປປ ລາວ
ນາຍົກລັດຖະມົນຕີ

ສອນໄຊ ສີພັນດອນ